ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------

ກະຊວງຄົມມະນາຄົມ ຂົນສົ່ງ

ໄປສະນີ ແລະ ກໍ່ສ້າງ

ເລກທີ່ 219 /ຄຂປກ

ວຽງຈັນ, ວັນທີ່ 19/4/2000

# ຂໍ້ກຳນົດ

## ວ່າດ້ວຍ ກົດລະບຽບການຈະລາຈອນທາງນ້ຳ

- ອີງຕາມດຳລັດ ນາຍົກລັດຖະມົນຕີ ເລກທີ່ 66/ນຍ, ລົງວັນທີ່ 20/05/1999 ວ່າດ້ວຍ ການຈັດຕັ້ງ ຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.
- ອີງຕາມຂໍ້ກຳນົດ ວ່າດ້ວຍ ການຂົນສົ່ງທາງນ້ຳ ສະບັບເລກທີ່ 104, ລົງວັນທີ່ 12/01/2000

ລັດຖະມົນຕີ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ອອກຂໍ້ກຳນົດ:

## ໝວດທີ່ I
## ຂໍ້ກຳນົດ ທົ່ວໄປ

**ມາດຕາ 1: ຈຸດປະສົງ.**

ຂໍ້ກຳນົດສະບັບນີ້ ວາງກົດລະບຽບເພື່ອຄຸ້ມຄອງ ການຈະລາຈອນທາງນ້ຳ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມປອດໄພ ແລະ ທັງເພື່ອປົກປັກຮັກສາສິ່ງແວດລ້ອມ ໃນການແລ່ນເຮືອຢູ່ຕາມລຳແມ່ນ້ຳຂອງແຫຼ່ງນ້ຳຕ່າງໆ ຢູ່ພາຍໃນ ສ.ປ.ປ ລາວ ແລະ ຢູ່ຕາມລຳແມ່ນ້ຳ ຊາຍແດນລະຫວ່າງປະເທດ.

**ມາດຕາ 2: ຄວາມໝາຍ ຂອງການຈະລາຈອນທາງນ້ຳ.**

ການຈະລາຈອນທາງນ້ຳ ແມ່ນການແລ່ນໄປ - ມາ ຕາມລຳແມ່ນ້ຳ ຫຼື ແຫຼ່ງນ້ຳຕ່າງໆ ຂອງພາຫະນະຂົນສົ່ງທາງນ້ຳ ທຸກຊະນິດ ທີ່ແລ່ນດ້ວຍເຄື່ອງຈັກ ນັບແຕ່ ເຮືອຖໍ່, ເຮືອພາຍ, ແພ ຈົນເຖິງເຮືອຈັກຂະໜາດ ແລະ ປະເພດຕ່າງໆ.

## ໝວດທີ II

## ກົດລະບຽບລວມ ໃນການຈະລາຈອນທາງນ້ຳ

**ມາດຕາ 3: ທິດທາງ ຂອງການແລ່ນເຮືອ ຫຼື ພາຫະນະຂົນສົ່ງທາງນ້ຳ.**

ເຮືອ ຫຼື ພາຫະນະຂົນສົ່ງທາງນ້ຳ ທຸກຊະນິດ, ທຸກຂະໜາດ ແລະ ທຸກປະເພດ ຕ້ອງແລ່ນກຳ ຂວາ ຂອງຕົນ ຢູ່ສະເໝີ.

**ມາດຕາ 4: ການຊິງກັນຂຶ້ນໜ້າ ແລະ ການແລ່ນສວນທາງ**

ການແລ່ນເຮືອຊິງກັນຂຶ້ນໜ້າ ຕ້ອງປະຕິບັດດັ່ງນີ້:

- ຜູ້ຂັບເຮືອ ລຳທີ່ຢູ່ທາງຫຼັງ ຕ້ອງສົ່ງສຽງສັນຍານເຕືອນ ເພື່ອຂໍທາງ ນຳເຮືອທີ່ແລ່ນຢູ່ທາງ ໜ້າ ແລະ ຕ້ອງສັງເກດ ໃຫ້ເຫັນ ຢ່າງຈະແຈ້ງວ່າ ຂອບເຂດໜ້ານ້ຳ ທີ່ຈະແລ່ນຊິງຂຶ້ນນັ້ນ ມີຄວາມ ກ້ວາງ ພຽງພໍ ແລະ ບໍ່ມີສິ່ງກີດຂວາງ ຫຼື ເປັນອຸປະສັກ ໃຫ້ແກ່ການຊິງຂຶ້ນນັ້ນ.
- ເຮືອລຳທີ່ແລ່ນຊິງຂຶ້ນໜ້າ ຕ້ອງແລ່ນຊິງທາງກຳຊ້າຍ ຂອງ ເຮືອລຳທີ່ຢູ່ທາງໜ້າ ຢູ່ສະ ເໝີ.
- ກ່ອນຈະແລ່ນເຮືອ ສວນທາງກັນນັ້ນ, ຜູ້ຂັບເຮືອ ແຕ່ລະລຳ ຕ້ອງສາມາດສັງເກດເຫັນ ແລະ ຄາດ ຄະເນໄດ້ ຄວາມກວ້າງ ຂອງ ຂອບເຂດໜ້ານ້ຳ ຢ່າງພຽງພໍ.

**ມາດຕາ 5: ການແລ່ນເຮືອລອດຂົວ.**

ໃນການແລ່ນເຮືອລອດຂົວ ຜູ້ຂັບເຮືອ ຕ້ອງລຸດຜ່ອນຄວາມໄວລົງ ແລະ ຂັບໄປຕາມແລວ ນ້ຳ ທີ່ທາງການໄດ້ກຳນົດໃຫ້ ຫຼື ປະຕິບັດຕາມປ້າຍເຄື່ອງໝາຍ ຫຼື ສັນຍານຕ່າງໆ.

**ມາດຕາ 6: ການແລ່ນເຮືອ ໃນເວລາກາງຄືນ ແລະ ໃນສະພາບ ອາກາດມືດມົວ.**

ໃນການແລ່ນເຮືອ ໃນເວລາກາງຄືນ ແລະ ໃນສະພາບອາກາດມືດມົວ, ຜູ້ຂັບເຮືອ ຫຼື ຜູ້ຈັດ ການເຮືອ ຕ້ອງໄຕ້ໂຄມໄຟ ເບື້ອງທາງ ທີ່ສາມາດແນມເຫັນທາງໜ້າ ໃນລະຍະໄກ ບໍ່ຕ່ຳກວ່າ 100 ແມັດ ຂຶ້ນໄປ.

**ມາດຕາ 7: ການຈອດເຮືອ ທອດສະໝໍ ຢູ່ນອກຝັ່ງ ຫຼື ຢູ່ນອກທ່າເຮືອ.**

ໃນການຈອດທອດສະໝໍ ຢູ່ນອກຝັ່ງ ຫຼື ຢູ່ນອກທ່າເຮືອ, ຜູ້ຂັບເຮືອ ຫຼື ຜູ້ຈັດການເຮືອ ຕ້ອງຕິດເຄື່ອງໝາຍເຕືອນໄວ້ ຢູ່ເທິງເຮືອ ທີ່ສາມາດແນມເຫັນໄດ້ ແຕ່ໄກ ແລະ ຍາມກາງຄືນ ຕ້ອງ ຕິດຕັ້ງແສງສະຫວ່າງ ຫຼື ໄຟສັນຍານໄວ້.

ມາດຕາ 8: ເຄື່ອງໝາຍ ແລະ ສັນຍານ ການຈະລາຈອນທາງນ້ຳ.

- ເພື່ອເຮັດໃຫ້ ການຈະລາຈອນທາງນ້ຳ ມີຄວາມປອດໄພ, ຜູ້ຂັບພາຫະນະ ຂົນສົ່ງທາງນ້ຳ ທຸກສະນິດ, ທຸກຂະໜາດ ແລະ ທຸກປະເພດ ຕ້ອງປະຕິບັດ ຕາມເຄື່ອງໝາຍ ແລະ ສັນຍານ ການຈະລາຈອນທາງນ້ຳ ຢ່າງເຂັ້ມງວດ.

- ເຄື່ອງໝາຍສັນຍານການຈະລາຈອນທາງນ້ຳ ແບ່ງອອກເປັນປະເພດຕ່າງໆ ດັ່ງນີ້:

+ ເຄື່ອງໝາຍ ແລະ ສັນຍານເຕືອນ ເຊັ່ນ: ເຕືອນອັນຕະລາຍ, ສິ່ງກີດຂວາງ, ດ່ານກວດກາ ຂອງເຈົ້າໜ້າ ທີ່ກ່ຽວຂ້ອງ ແລະ ອື່ນໆ;

+ ເຄື່ອງໝາຍ ແລະ ສັນຍານແນະນຳ ເຊັ່ນ: ບອກບ່ອນຈອດເຮືອ, ບ່ອນຖິ້ມສະໝໍ, ບອກສະຖານທີ່ຕ່າງໆ ແລະ ອື່ນໆ;

+ ເຄື່ອງໝາຍ ແລະ ສັນຍານບັງຄັບເຊັ່ນ: ໃຫ້ລຸດຜ່ອນຄວາມໄວ ຕາມຕົວເລກໝາຍບອກ, ໃຫ້ບີບແກສົ່ງ ສັນຍານ, ໃຫ້ໄປຕາມເສັ້ນທາງຊີ້ບອກ ແລະອື່ນໆ.

+ ເຄື່ອງໝາຍ ແລະ ສັນຍານຫ້າມ ເຊັ່ນ: ຫ້າມຜ່ານ, ຫ້າມແລ່ນຊີງກັນ, ຫ້າມແລ່ນສວນກັນ, ຫ້າມຈອດ ແລະ ອື່ນໆ.

- ເຄື່ອງໝາຍ ແລະ ສັນຍານຈະລາຈອນທາງນ້ຳ ປະກອບດ້ວຍລັກສະນະ ຕ່າງໆ ເຊັ່ນ:

+ ປ້າຍເຄື່ອງໝາຍ ຢູ່ຕາມແຄມຝັ່ງ;

+ ຫຼັກໝາຍກິໂລແມັດ;

+ ທາດໝາຍແລວນ້ຳເລິກ;

+ ລະບົບໄຟສັນຍານ ແລະອື່ນໆ.

ບັນດາເຄື່ອງໝາຍ ແລະ ສັນຍານການຈະລາຈອນທາງນ້ຳ ໄດ້ກຳນົດໄວ້ ໃນເອກະສານຊ້ອນທ້າຍ ຂອງຂໍ້ກຳນົດນີ້.

## ໝວດທີ III

### ກົດລະບຽບ ການຈະລາຈອນ ສຳລັບ ເຮືອຂົນສົ່ງ ສິນຄ້າ ແລະ ເຮືອຂົນສົ່ງ ຜູ້ໂດຍສານ.

**ມາດຕາ 9: ການຈັດຕັ້ງພາຍໃນເຮືອ.**

ເຮືອຂົນສົ່ງສິນຄ້າ ແລະ ເຮືອຂົນສົ່ງຜູ້ໂດຍສານ ທຸກລຳ ຕ້ອງມີການຈັດຕັ້ງທີ່ເໝາະສົມ ກັບຂະໜາດ ຂອງເຮືອ ເພື່ອການຄຸ້ມຄອງສິນຄ້າ ບໍ່ໃຫ້ຕົກເຮ່ຍເສັຍຫາຍ, ອຳນວຍຄວາມສະດວກ ຈັດຄວາມເປັນລະບຽບຮຽບຮ້ອຍ ແລະ ຮັບປະກັນ ຄວາມປອດໄພ ໃຫ້ແກ່ຜູ້ໂດຍສານ.

- ການຈັດຕັ້ງສຳລັບ ເຮືອຂະໜາດໃຫ່ຍ ແລະ ຂະໜາດກາງ ຕ້ອງໃຫ້ມີບຸກຄະລາກອນ ດັ່ງນີ້:

| | |
|---|---|
| + ຜູ້ຈັດການເຮືອ | 1 ຄົນ |
| + ຜູ້ຂັບເຮືອ | 1 - 2 ຄົນ |
| + ນາຍຊ່າງຈັກ | 1 - 2 ຄົນ |

+ ລູກເຮືອ ຫຼື ຄົນງານ ປະຈຳເຮືອ 3 ຄົນ

- ສ່ວນການຈັດຕັ້ງ ສຳລັບເຮືອຂະໜາດນ້ອຍນັ້ນ ຕ້ອງໃຫ້ມີຜູ້ຊ່ວຍຜູ້ຂັບເຮືອ ຢ່າງນ້ອຍ 1 ຄົນ

**ມາດຕາ 10: ເອກະສານຈຳເປັນ ປະຈຳເຮືອຂົນສົ່ງ.**

ໃນການແລ່ນເຮືອຂົນສົ່ງສິນຄ້າ ແລະ ເຮືອຂົນສົ່ງຜູ້ໂດຍສານ ທຸກຖ້ຽວ ຜູ້ຂັບເຮືອ ຫຼື ຜູ້ຈັດການເຮືອ ຕ້ອງມີເອກະສານ ປະຈຳເຮືອດັ່ງນີ້:

1- ໃບອະນຸຍາດ ຂັບເຮືອ ຂອງຜູ້ຂັບເຮືອທີ່ຖືກຕ້ອງ ຕາມຂະໜາດຂອງຜູ້ຂັບເຮືອ, ຍົກເວັ້ນເຮືອຈັກຕິດທ້າຍ

ຂະໜາດ ຕໍ່າກວ່າ 5 ແຮງມ້າ;

2- ໃບອະນຸຍາດແລ່ນເຮືອ;

3- ໃບກວດກາສະພາບເຕັກນິກ;

4- ໃບປະກັນໄພ ບຸກຄົນທີ່ສາມ;

5- ໃບອະນຸຍາດ ເຮັດວິສາຫະກິດຂົນສົ່ງສິນຄ້າ ແລະ ໂດຍສານ;

6- ໃບນຳສົ່ງສິນຄ້າ ຫຼື ຂື້ນບັນຊີ ຜູ້ໂດຍສານ.

**ມາດຕາ 11: ໜ້າທີ່ ຂອງຜູ້ຈັດການ ແລະ ຜູ້ຂັບເຮືອຂົນສົ່ງ.**

ເພື່ອຮັບປະກັນ ຄວາມສະດວກ ແລະ ຄວາມປອດໄພ ໃນການຈະລາຈອນ, ນອກຈາກປະຕິບັດ ຕາມກົດລະບຽບ ການຈະລາຈອນທາງນ້ຳແລ້ວ, ຜູ້ຈັດການ ຫຼື ຜູ້ຂັບເຮືອ ຂົນສົ່ງສິນຄ້າ ແລະ ຜູ້ຂັບເຮືອຂົນສົ່ງ ຜູ້ໂດຍສານ ຕ້ອງປະຕິບັດ ດັ່ງນີ້:

1. ກ່ອນອອກເດີນທາງ

- ຕ້ອງແຈ້ງແຜນການເດີນທາງ ທີ່ແນ່ນອນ ເທົ່າທີ່ເປັນໄປໄດ້;
- ກຽມເອກະສານ ທີ່ຈຳເປັນຕ່າງໆ ປະຈຳຕົວ ແລະ ປະຈຳເຮືອ ໃຫ້ຄົບຖ້ວນ;
- ກຽມສະພາບເຕັກນິກຕ່າງໆ ຂອງເຮືອ ໃຫ້ຢູ່ໃນສະພາບດີ ແລະ ຮັບປະກັນ ໃນການໃຊ້ງານ;
- ກຽມເຄື່ອງປ້ອງກັນໄພ ໃຫ້ລົບບູນ ແລະ ເໝາະສົມ ເຊັ່ນ: ບັ້ງມອດໄຟ, ເຄື່ອງຊູຊີບ, ຈັກສູບນ້ຳ ແລະ ອື່ນໆ;
- ຈັດວາງ ຫຼື ມັງນສິນຄ້າ ເຄື່ອງຂອງ ໃຫ້ເປັນລະບຽບຮຽບຮ້ອຍ ຫຼື ຈັດຜູ້ໂດຍສານ ເຂົ້ານັ່ງປະຈຳທີ່ ຢ່າງ ເປັນລະບຽບ;
- ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງ ໃນການກວດກາ

2. ໃນເວລາເດີນທາງ

- ຫາກພົບເຫັນເຮືອລຳອື່ນ ເກີດອຸປະຕິເຫດ ຕ້ອງນຳເຮືອຂອງຕົນ ເຂົ້າຊ່ວຍເຫຼືອໂດຍທັນທີ;
- ຫາກຖືກເຈົ້າໜ້າທີ່ກ່ຽວຂ້ອງ ສົ່ງສັນຍານຮຽກໃຫ້ຢຸດ ຫຼື ແວ່ຈອດ ເພື່ອທຳການກວດກາ ກໍ່ຕ້ອງປະຕິບັດ ຕາມພ້ອມທັງ ອຳນວຍຄວາມສະດວກ ເປັນຢ່າງດີ;

- ຄຸ້ມຄອງສິນຄ້າ ເຄື່ອງຂອງ ບໍ່ໃຫ້ຕົກເຮັ່ຍເສັຍຫາຍ ຫຼື ບໍ່ໃຫ້ເສັຍຄຸນ ຈົນຮອດຈຸດໝາຍ ຫຼື ຄຸ້ມຄອງ ແລະ ສ້າງທຸກເງື່ອນໄຂ ໃຫ້ຜູ້ໂດຍສານ ໄດ້ຮັບຄວາມສະດວກເທົ່າທີ່ຈຳເປັນ ແລະ ມີຄວາມປອດໄພ ຈົນຮອດຈຸດໝາຍ.

3. ເມື່ອເຖິງຈຸດໝາຍ

- ນຳເອົາເຮືອ ເຂົ້າຈອດຢູ່ທ່າເຮືອ ຫຼື ທ່າຈອດຮັບສົ່ງ ຜູ້ໂດຍສານ ທີ່ທາງການໄດ້ກຳນົດໄວ້;
- ມອບສົ່ງສິນຄ້າ ເຄື່ອງຂອງ ໃຫ້ແກ່ຜູ້ເປັນເຈົ້າຂອງ ຢ່າງຄົບຖ້ວນ;
- ຈັດຜູ້ໂດຍສານ ອອກຈາກເຮືອ ຢ່າງເປັນລະບຽບ.

**ມາດຕາ 12: ໜ້າທີ່ ຂອງ ເຈົ້າຂອງສິນຄ້າ.**

ກ່ອນຈະນຳສິນຄ້າ ເຄື່ອງຂອງ ລົງບັນຈຸໃສ່ເຮືອຂົນສົ່ງ, ເຈົ້າຂອງສິນຄ້າ ຕ້ອງບັນຈຸສິນຄ້າເຄື່ອງຂອງ ໃສ່ຫີບຫໍ່ ຢ່າງແໜ້ນໜາ ຫຼືຖືກຕ້ອງ ຕາມມາດຕະຖານ ຂອງ ການຫຸ້ມຫໍ່ ຫຼື ການບັນຈຸສິນຄ້າ ແຕ່ລະຊະນິດ.ເຈົ້າຂອງສິນຄ້າ ຫຼື ຜູ້ຕາງໜ້າ ຕ້ອງຖືເອກະສານກຳກັບສິນຄ້າ ຫຼື ໃບນຳສົ່ງສິນຄ້າ ໄປນຳເຮືອ ໃນກໍລະນີ ທີ່ເຈົ້າຂອງສິນຄ້າ ຫຼື ຜູ້ຕາງໜ້າ ບໍ່ໄດ້ໄປນຳເຮືອຂົນສົ່ງສິນຄ້ານັ້ນ, ເຈົ້າຂອງສິນຄ້າ ຕ້ອງມອບເອກະສານດັ່ງກ່າວ ໄວ້ນຳຜູ້ຈັດການເຮືອ ຫຼື ຜູ້ຂັບເຮືອຂົນສົ່ງນັ້ນ.

**ມາດຕາ 13: ໜ້າທີ່ ຂອງ ຜູ້ໂດຍສານ.**

ຜູ້ໂດຍສານທາງເຮືອ ໂດຍທົ່ວໄປ ຕ້ອງປະຕິບັດ ຕາມລະບຽບການດັ່ງນີ້:

1. ກ່ອນອອກເດີນທາງ:

+ ຕ້ອງຖືບັດປະຈຳຕົວ, ໜັງສືຜ່ານແດນ ຫຼື ເອກະສານອື່ນໆ ທີ່ຈຳເປັນ ຕາມລະບຽບການ.

+ ຖ້າຖືອາວຸດໄປນຳ ຕ້ອງມອບອາວຸດນັ້ນ ຝາກໄວ້ນຳຜູ້ຈັດການເຮືອ, ຍົກເວັ້ນທະຫານ, ຕຳຫຼວດ ຫຼື ເຈົ້າ ໜ້າທີ່ ຂອງລັດຂະແໜງການອື່ນ ທີ່ໄດ້ຮັບອະນຸຍາດໃຫ້ຖືອາວຸດໃນການເດີນທາງໄປວຽກລັດຖະການ;

+ ເຂົ້ານັ່ງປະຈຳທີ່ ທີ່ທາງຜູ້ຈັດການ ຫຼື ລູກເຮືອຈັດໃຫ້ ຢ່າງເປັນລະບຽບ;

+ ຮັກສາເຄື່ອງປະຈຳຕົວ ຂອງຕົນ ຫຼື ຝາກນຳຜູ້ຈັດການ ຫຼື ລູກເຮືອມຽນໄວ້ຢ່າງເປັນລະບຽບ;

+ ປະຕິບັດຕາມຂໍ້ແນະນຳ ແລະ ລະບຽບການ ກ່ຽວກັບຄວາມປອດໄພ ທີ່ການຈັດຕັ້ງເຮືອວາງອອກ.

2. ໃນເວລາເດີນທາງ:

- ຕ້ອງຢູ່ປະຈຳທີ່ຂອງຕົນ, ບໍ່ຍ່າງໄປ - ມາ ໂດຍບໍ່ຈຳເປັນ ບໍ່ໃຊ້ສຽງດັງລົບກວນຜູ້ອື່ນ.
- ໃນເວລາເຈົ້າໜ້າທີ່ກ່ຽວຂ້ອງ ຂໍກວດເອກະສານ ຕ້ອງໃຫ້ຄວາມຮ່ວມມືເປັນຢ່າງດີ.

3. ເມື່ອຮອດຈຸດໝາຍ

- ກ່ອນອອກຈາກເຮືອ ຕ້ອງເກັບກຳເອົາເຄື່ອງຂອງ ຂອງຕົນເອງ ແລະ ອອກຈາກເຮືອ ຢ່າງເປັນລະບຽບ.

## ໝວດ ທີ IV
## ການເກືອດຫ້າມ

**ມາດຕາ 14: ຂໍ້ເກືອດຫ້າມ ສຳລັບເຈົ້າຂອງ, ຜູ້ຈັດການ ຫຼື ຜູ້ຂັບເຮືອຂົນສົ່ງ ທົ່ວໄປ.**

ເພື່ອປະຕິບັດ ກົດລະບຽບການຈະລາຈອນຢ່າງເຄັ່ງຄັດ ທັງເພື່ອຮັບປະກັນຄວາມສະດວກ ແລະ ຄວາມປອດໄພ ໃນການແລ່ນເຮືອ, ເຈົ້າຂອງ, ຜູ້ຈັດການ ຜູ້ຂັບເຮືອຂົນສົ່ງສິນຄ້າ, ເຮືອຂົນສົ່ງໂດຍສານ ລວມທັງເຮືອຂົນສົ່ງ ສ່ວນຕົວ ຕ້ອງປະຕິບັດ ຕາມ ກົດລະບຽບ ການຈະລາຈອນທາງນ້ຳ ແລະ ປະຕິບັດ ຕາມ ຂໍ້ເກືອດຫ້າມຕ່າງໆ ດັ່ງຕໍ່ໄປນີ້ ຢ່າງເຂັ້ມງວດ:

- ຫ້າມຜູ້ຂັບເຮືອ ເສບສິ່ງມຶນເມົາ ຫຼື ຢາເສບຕິດ ແລະ ຫ້າມຂັບເຮືອ ໃນເວລາມຶນເມົາ ຫຼື ມີສຸຂະພາບອ່ອນ ເພຍ ຢ່າງເດັດຂາດ;
- ຫ້າມນຳເອົາເຮືອ ທີ່ບໍ່ໄດ້ຜ່ານການກວດກາ ສະພາບເຕັກນິກ, ບໍ່ມີປ້າຍທະບຽນ, ບໍ່ມີໃບອະນຸຍາດແລ່ນ
  ເຮືອ ອອກແລ່ນເຄື່ອນໄຫວວຽກງານຕ່າງໆ;
- ຫ້າມແລ່ນເຮືອ ໃນເວລາກາງຄືນ ໂດຍບໍ່ມີໄຟເບື້ອງທາງ, ໃນເວລາທີ່ມີນ້ຳໝອກລົງໜາ ບໍ່ສາມາດແນມ
  ເຫັນໄດ້ໄລຍະໄກ ແລະ ໃນເວລາຝົນຕົກ ມີລົມພັດແຮງ ເກີດຟອງນ້ຳສູງ;
- ຫ້າມຂັບເຮືອແລ່ນຊີງກັນຂຶ້ນໜ້າ ຫຼື ແລ່ນສວນທາງກັນ ໃນຕອນເສັ້ນທາງແລ່ນເຮືອ ທີ່ຄັບແຄບເຊັ່ນ:
  ຊ່ວງທາງຜ່ານຂຶ້ນລົງແກ້ງ, ກ້ອງຂົວ, ຊ່ວງຮອມ ຫຼື ຊວງແຄບ ຂອງສາຍນ້ຳ;
- ຫ້າມຂົນສົ່ງ ວັດຖຸອັນຕະລາຍ ເຊັ່ນ: ອາວຸດເສິກ, ວັດຖຸລະເບີດ, ວັດຖຸໄວໄຟ, ສານເຄມີ ຫຼ ສານທີ່ເປັນພິດ
  ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການຂອງລັດ ທີ່ກ່ຽວຂ້ອງ;
- ຫ້າມບັນທຸກສິນຄ້າ ໜີພາສີ ແລະ ຢາເສບຕິດ ທຸກປະເພດ;
- ຫ້າມຂັບເຮືອ ແລ່ນເຂົ້າໄປໃກ້ບໍລິເວນທີ່ມີປ້າຍຫ້າມ ຫຼື ປ້າຍເຕືອນອັນຕະລາຍ ຕິດຕັ້ງໄວ້ເຊັ່ນ: ບໍລິເວນ ອ່າງນ້ຳ ໜ້າເຂື່ອນເກັບນ້ຳ ຫຼື ເຂື່ອນໄຟຟ້າ, ເຮືອນຈັກເຄື່ອງສູບນ້ຳປະປາ, ເຮືອຈັກເຄື່ອງສູບນ້ຳຊົນລະ ປະທານ;
- ຫ້າມຈອດເຮືອທອດສະໝໍ ຢູ່ກ້ອງຂົວ ຫຼື ມັດເຊືອກໃສ່ເສົາ ຫຼື ຮາວຂົວ;
- ຫ້າມນຳເຮືອຂົນສົ່ງສິນຄ້າ ແລະ ເຮືອຂົນສົ່ງໂດຍສານ ທີ່ຍັງບໍ່ໄດ້ຮັບອະນຸຍາດໃຫ້ ເຮັດວິສາຫະກິດຂົນ ສົ່ງອອກເຄື່ອນໄຫວ ທຸລະກິດ;
- ຫ້າມນຳເອົາເຮືອຂົນສົ່ງສິນຄ້າ ທຳການຂົນສົ່ງຜູ້ໂດຍສານ ຍົກເວັ້ນແຕ່ເຮືອທີ່ໄດ້ຮັບອະນຸຍາດ

ເຮັດວິສາຫະ ກິດຂົນສົ່ງສິນຄ້າ ພ້ອມທັງຂົນສົ່ງໂດຍສານ ແລະ ຫ້າມບັນທຸກສິນຄ້າເຄື່ອງຂອງ ເກີນ ນ້ຳໜັກບັນທຸກ ຂອງເຮືອ ທີ່ທາງລັດຖະການ ໄດ້ກຳນົດໃຫ້;

- ຫ້າມນຳເອົາເຮືອ ຂົນສົ່ງໂດຍສານ ທຳການຂົນສົ່ງສິນຄ້າ ໂດຍບໍ່ໄດ້ຮັບອະນຸຍາດ ເຮັດວິສາຫະ ກິດຂົນ ສົ່ງສິນຄ້າ ພ້ອມທັງຂົນສົ່ງໂດຍສານ ແລະ ຫ້າມບັນຈຸໂດຍສານ ແລະ ເຄື່ອງຂອງເກີນຂະ ໜາດບັນຈຸຂອງ

ເຮືອ ທີ່ທາງລັດຖະການໄດ້ກຳນົດໃຫ້;

- ຫ້າມຮັບເອົາຜູ້ໂດຍສານ ທີ່ເປັນຄົນໃບ້ ເສຍຈິດ, ຄົນທີ່ມີອາການມຶນເມົາ ແລະ ເດັກນ້ອຍທີ່ບໍ່ມີຜູ້ ປົກຄອງໄປນຳ;

- ຫ້າມບຸກຄະລາກອນ ຂອງເຮືອທຸກລຳ ຖິ້ມສິ່ງເສດເຫຼືອຕ່າງໆ ລົງນ້ຳ ຕາມສາຍທາງແລ່ນເຮືອ ເຊັ່ນ: ເສດ ນ້ຳມັນເຄື່ອງ, ເສດຊິ້ນສ່ວນອາໄລ່, ເສດອາຫານ ແລະ ສິ່ງເສດເຫຼືອອື່ນໆ.

**ມາດຕາ 15: ຂໍ້ເກືອດຫ້າມ ສຳລັບ ຜູ້ໂດຍສານ.**

ໃນການເດີນທາງ ໂດຍທາງເຮືອນັ້ນ, ເພື່ອຄວາມສະດວກ ແລະ ຄວາມປອດໄພ ຜູ້ໂດຍ ສານ ທຸກຄົນ ຕ້ອງປະຕິບັດ ຕາມຂໍ້ແນະນຳຕ່າງໆ ຂອງການຈັດຕັ້ງເຮືອ ແລະ ຂໍ້ເກືອດຫ້າມ ດັ່ງຕໍ່ໄປນີ້:

- ຫ້າມໃຊ້ສຽງດັງລົບກວນ ຫຼື ສ້າງຄວາມວຸ້ນວາຍ ຢູ່ໃນເຮືອ;
- ຫ້າມມີຢາເສບຕິດ ໃນຄອບຄອງ ແລະ ຫ້າມເສບສິ່ງມຶນເມົາ ຫຼື ຢາເສບຕິດ;
- ຫ້າມຖິ້ມສິ່ງເສດເຫຼືອລົງນ້ຳ ຕາມສາຍທາງແລ່ນເຮືອ ເຊັ່ນ: ສິ່ງຂອງເຫຼືອໃຊ້ ຕ່າງໆ.

## ໝວດ ທີ V
## ຂໍ້ກຳນົດ ສຸດທ້າຍ

**ມາດຕາ 16: ການຈັດຕັ້ງປະຕິບັດ.**

ມອບໃຫ້ກົມຂົນສົ່ງຊື້ນຳ ແລະ ຕິດຕາມກວດກາ ສົມທົບກັບ ພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ໃການຈັດຕັ້ງປະຕິບັດ ກົດລະບຽບ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 17: ຜົນສັກສິດ

ຂໍ້ກຳນົດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ໄປ, ບັນດາລະບຽບການ ທີ່ບໍ່ ສອດຄ່ອງ ກັບກົດລະບຽບສະບັບນີ້ ລ້ວນຖືກລົບລ້າງ.

ລັດຖະມົນຕີ ວ່າການ ກະຊວງ ຄົມມະນາຄົມ
ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ
ເຊັນ ແລະ ປະທັບຕາ
ທ່ານ ເພົາ ບຸນນະຜົນ

ເອກກະສານຊ້ອນທ້າຍ

ຂອງຂໍ້ກຳນົດ ວ່າດ້ວຍ ກົດລະບຽບການຈະລາຈອນທາງນ້ຳ

---

1. ເຄື່ອງໝາຍສັນຍານ:

(1)- –ເຄື່ອງໝາຍສັນຍານປ່ຽນແທນ ລະຫວ່າງໄຟອຳນາດ ແລະ ແຜ່ນປ້າຍ:

+ ສັນຍານຫ້າມຜ່ານດ້ວຍໄຟສີແດງ  ປ່ຽນແທນດ້ວຍປ້າຍ 

+ ສັນຍານຜ່ານໄປໄດ້ ດ້ວຍໄຟສີຂຽວ  ປ່ຽນແທນດ້ວຍປ້າຍ 

+ ສັນຍານຜ່ານໄດ້ ແຕ່ຕ້ອງລະວັງ ດ້ວຍໄຟເຫຼືອງ  ປ່ຽນແທນດ້ວຍປ້າຍ 

+ ເຄື່ອງໝາຍສັນຍານກ້ອງຂົວ



- ຫ້າມຜ່ານເດັດຂາດ



- ຫ້າມຜ່ານໄປໄດ້ທັງສອງທາງ (ໄປ ແລະ ກັບ )



- ຜ່ານໄປໄດ້ທາງດຽວ ( ໄປ ຫຼື ກັບ ເທົ່ານັ້ນ )

2. ປ້າຍສັນຍານບັງຄັບ:



- ປ້າຍບັງຄັບໃຫ້ຈອດ ໃນບາງກໍລະນີເຊັ່ນ: ເພື່ອກວດກາ ຫຼື ເສັ້ນທາງເດີນເຮືອປິດ ການສັນຈອນ



- ປ້າຍບັງຄັບ ໃຫ້ລຸດຜ່ອນຄວາມໄວ ຕາມຕົວເລກໝາຍບອກ ຢູ່ໃນປ້າຍ

( ໝາຍເຖິງຄວາມໄວສູງສຸດ ເປັນ ກມ/ຊມ )



- ປ້າຍບັງຄັບ ໃຫ້ບີບແກສົ່ງສັນຍານ



- ປ້າຍບັງຄັບ ໃຫ້ເດີນຕາມເສັ້ນທາງທີ່ຊີ້ບອກ



- ປ້າຍບັງຄັບໃຫ້ເດີນເຮືອ ໄປຕາມລູກສອນ ທີ່ຊີ້ບອກຂ້າງຊ້າຍ ຫຼື ຂ້າງຂວາ ຂອງຮ່ອງນ້ຳເດີນເຮືອ

- ຫ້າມເຮືອທອດສະໝໍ



- ຫ້າມເຮັດໃຫ້ມີຄື້ນຟອງນ້ຳ



- ຫ້າມລ້ຽວເຮືອກັບ



- ລວງເລິກ ຂອງນ້ຳຈຳກັດ





- ລວງສູງຈຳກັດ ຈາກໜ້ານ້ຳ



- ລວງກວ້າງ ຂອງທາງຜ່ານ ຫຼື ຮ່ອງນ້ຳຈຳກັດ

**ໝາຍເຫດ:** ປ້າຍເຄື່ອງໝາຍຈຳກັດນີ້ ຕິດໄວ້ຢູ່ຕາມຮ່ອງນ້ຳເດີນເຮືອ, ກ້ອງຂົວ ທີ່ເສັ້ນທາງເດີນເຮືອ ມີຄວາມ

ຈຳກັດສູງ, ລວງກວ້າງ, ລວງເລິກ ຂອງນ້ຳ.

5. <u>ປ້າຍບອກສະຖານທີ່</u>:




- ປ້າຍຈອດເຮືອ



- ປ້າຍບ່ອນຖິ້ມສະໝໍ



- ປ້າຍບ່ອນຜູກເຮືອ




ປ້າຍບອກຂອບເຂດ ການຈອດເຮືອ



- ປ້າຍບອກທ່າຂ້າມເຮືອບັກ



- ປ້າຍບອກສະຖານທີ່ຕັ້ງເຂື່ອນກັ້ນນ້ຳ



- ປ້າຍບອກ ມີສາຍໄຟຟ້າແຮງສູງ